# ບົດຖະແຫຼງຂ່າວ

ສະຖານທູດ ອົດສະຕຣາລີ ປະຈຳລາວ

ນະຄອນຫຼວງວຽງຈັນ

7 ກັນຍາ

**ນັກສຶກສາລາວຈຳນວນ 31 ຄົນໄດ້ຮັບທຶນການສຶກສາໄປຮຽນຕໍ່ ປະເທດອົດສະຕຣາລີ**

ພະນະທ່ານ Malcolm Turnbull, ນາຍົກລັດຖະມົນຕີ ຂອງປະເທດອົດສະຕຣາລີ ແລະ ພະນະທ່ານ ພັນຄຳ ວິພາວັນ, ຮອງປະທານ ແຫ່ງປະເທດ ສປປ ລາວ ໄດ້ຮ່ວມກັນສະແດງຄວາມຍິນດີ ກັບນັກສຶກສາ ຈຳນວນ 31 ຄົນ ທັງຍິງ ແລະ ຊາຍ ທີ່ໄດ້ຮັບທຶນການສຶກສາໄປຮຽນຕໍ່ ປະເທດ ອົດສະຕຣາລີ.

ທຶນການສຶກສາອົດສະຕຣາລີນີ້ ໄດ້ສະໜອງໂອກາດ ໃຫ້ນັກສຶກສາລາວ ທັງຈາກພາກ ລັດ ແລະເອກະ ຊົນ ໄດ້ໄປສຶກສາຮ່ຳຮຽນໃນສາຂາວິຊາສະເພາະ ທີ່ມະຫາວິທະຍາໄລຕ່າງໆ ຢູ່ອົດສະຕຣາລີ. ໃນສົກຮຽນ 2017 ທີ່ຈະມາເຖິງນີ້ ມີນັກສຶກສາຈາກ ສປປ ລາວ ຈຳນວນ 31 ຄົນ, ຍິງ 21 ຄົນ ແລະ ຊາຍ 10 ຄົນ ຈະໄດ້ໄປສຶກສາຮ່ຳຮຽນຕໍ່ທີ່ອົດສະຕຣາລີ ໃນສາຂາວິຊາຕ່າງໆ ເຊັ່ນ ການບໍລິຫານຄຸ້ມຄອງລັດ, ເສດຖະກິດ, ການເງິນ, ວຽກງານພັດທະນາຊຸມຊົນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. ຫຼັງຈາກຈົບການສຶກ ສາ, ກຸ່ມຄົນເຫຼົ່ານີ້ ຈະກັບຄືນ ສປປລາວ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາຂອງປະເທດ.

ໃນພິທີດັ່ງກ່າວ ທ່ານ Turnbull ຍັງໄດ້ປະກາດ ຂະຫຍາຍໄລຍະເວລາຈັດຕັ້ງປະຕິບັດ ວຽກງານຂອງ ສະຖາບັນ ລາວ-ອົດສະຕຣາລີ ເພື່ອສະໜັບສະໜູນການພັດທະນາຊັບພະຍາກອນມະນຸດ ໄປສູ່ໄລຍະທີ II ຢ່າງເປັນທາງການ (2017-2021) ເຊິ່ງໄລຍະທີ II ນີ້ ສະຖາບັນ ລາວ-ອົດສະຕຣາລີ ຈະໄດ້ສະໜອງ ທຶນ ການສຶກສາ ຈຳນວນ 120 ທຶນ, ທຶນສຳລັບຮຽນທີ່ມະຫາວິທະຍາໄລຕ່າງໆພາຍໃນປະເທດ ຈຳນວນ 280 ທຶນ ລວມໄປເຖິງການຝຶກອົບຮົມໃຫ້ພະນັກງານ ລັດຖະກອນລາວ ດ້ານການບໍລິຫານຄຸ້ມຄອງລັດ ແລະ ການຝຶກອົບຮົມພາສາອັງກິດໃຫ້ແກ່ຄົນພິການ ຈຳນວນ 50 ຄົນ.

ທ່ານ ນາຍົກລັດຖະມົນຕີ ເນັ້ນຍ້ຳເຖິງຄວາມສຳຄັນ ຂອງທຶນການສຶກສາອົດສະຕຣາລີ ເພື່ອເສີມ ຂະຫຍາຍສາຍພົວພັນອັນ ແໜ້ນແຟ້ນລະຫວ່າງ ລາວ ແລະ ອົດສະຕຣາລີ.

ທ່ານ Malcolm Turnbull ແລະ ທ່ານ ດຣ ພັນຄຳ ຍັງໄດ້ຖືເອົາໂອກາດນີ້ ຮ່ວມກັນເປີດສະຖາບັນ ລາວ-ອົດສະຕຣາລີ ແລະ ສູນສົ່ງເສີມພາສາຕ່າງປະເທດ ຂອງລັດຖະບານລາວຢ່າງເປັນທາງການ ເຊິ່ງຫາກໍ່ ໄດ້ຮັບການບູລະນະຄືນໃໝ່ ໂດຍທຶນສະໜັບສະໜູນຈາກອົດສະຕຣາລີ.

ພິທີດັ່ງກ່າວ ຍັງໄດ້ຮັບກຽດເຂົ້າຮ່ວມ ໂດຍທ່ານ ດຣ ສຸພັນ ແກ້ວມີໄຊ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ເຊິ່ງເປັນຜູ້ຊີ້ນຳວຽກງານຂອງ ສະຖາບັນລາວ-ອົດສະຕຣາລີ. ນອກນັ້ນ ທ່ານນາງແສງ ເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມພິທີດັ່ງກ່າວເຊັ່ນ ກັນ.

Media Enquiries: Mr Khounkham Douangphachone, Australian Embassy, 021 353 800 ext. 125